**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 480 /ສທ

ນະຄອນຫລວງວຽງຈັນ, ວັນທີ 14 ກຸມພາ 2014

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການກະຊວງສາທາລະນະສຸກ

## ວ່າດ້ວຍການຮັບຮອງເອົາມາດຕະຖານຂອງໂຮງໝໍຊຸມຊົນ ແລະ ໂຮງໝໍນ້ອຍ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 178/ນຍ ລົງວັນທີ 05 ເມສາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ;
- ອີງຕາມ ການຕົກລົງຂອງກອງປະຊຸມຄະນະລັດຖະມົນຕີ ຄັ້ງວັນທີ 12 ກຸມພາ 2014 ທີ່ກະຊວງສາທາລະນະສຸກ;

**ລັດຖະມົນຕີວ່າການກະຊວງສາທາລະນະສຸກ ຕົກລົງ:**

ມາດຕາ 1. ຮັບຮອງເອົາມາດຕະຖານໂຮງໝໍຊຸມຊົນ ແລະ ໂຮງໝໍນ້ອຍ;

ມາດຕາ 2. ຫົວໜ້າໂຮງໝໍຊຸມຊົນມີຕຳແໜ່ງບໍລິຫານປະເພດ 4 ແລະ ຫົວໜ້າໂຮງໝໍນ້ອຍມີຕຳແໜ່ງບໍລິຫານປະເພດ 6 ຕາມດຳລັດ 99/ນຍ;

ມາດຕາ 3. ມອບໃຫ້ກົມປິ່ນປົວຈັດຕັ້ງປະຕິບັດຜັນຂະຫຍາຍມາດຕະຖານ ແລະ ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຮງໝໍຊຸມຊົນ ແລະ ໂຮງໝໍນ້ອຍ ໂດຍສົມທົບກັບກົມກອງ ແລະ ຂະແໜງການຕ່າງໆທີ່ກ່ຽວຂ້ອງ;

ມາດຕາ 4. ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ;

**ລັດຖະມົນຕີວ່າການກະຊວງສາທາລະນະສຸກ**

ບ່ອນນຳສົ່ງ:

- ຫ້ອງການກະຊວງ 1ສະບັບ
- ກົມກ່ຽວຂ້ອງບ່ອນລະ 1ສະບັບ
- ພະແນກສາທາລະນະສຸກແຂວງ-ນະຄອນຫລວງ,ບ່ອນລະ 1ສະບັບ
- ສຳເນົາ 2ສະບັບ

ສາດສະດາຈານ ດຣ.ເອກສະຫວ່າງ ວົງວິຈິດ